# ການປູກ ຫວາຍຕະບອງ

ການປູກເພື່ອຕັດຍອດ ແລະ ເກັບເສັ້ນ ເນື່ອງຈາກວ່າ ຫວາຍຕະບອງເປັນຫວາຍທີ່ເກີດເປັນສຸມ ເໝາະສົມຕໍ່ ການປູກເພື່ອຕັດຍອດ ແລະ ຕັດເສັ້ນ ຫວາຍຊະນິດນີ້ເປັນ ຫວາຍທີ່ໃຫຍ່ໄວ, ເສັ້ນຫວາຍຈັດຢູ່ໃນປະເພດຫວາຍເສັ້ນ ໃຫຍ່ຄືກັບຫວາຍທູນໜ້າຕ້າງແຕ່ 3 — 4 ຊມ ແລະ ຫວາຍຊະນິດນີ້ ໂຮງານປຸງແຕ່ງໄດ້ນຳເອົາມາເຮັດເປັນ ໂຄງຮ່າງຂອງຕັ່ງ, ໂຕະ ຕຽງ ແລະ ອື່ນໆ


ເສັ້ນຫວາຍທີ່ນຳໃຊ້ເຂົ້າໃນຫັດຖະກຳຈັກສານ

ແຕ່ປັດຈຸບັນເສັ້ນຫວາຍໄດ້ມີຈຳນວນໜ້ອຍ ຈຶ່ງໄດ້ນຳເອົາ ເສັ້ນຫວາຍທູນ ແລະ ເສັ້ນຫວາຍແອຊິດມາໃຊ້ແທນເສັ້ນ ຂອງຫວາຍຕະບອງ. ຫວາຍຕະບອງໄດ້ຖືກຈັດຢູ່ໃນອັບ ດັບ1 ຂອງຫວາຍເສັ້ນໃຫຍ່, ສະນັ້ນການປູກຫວາຍຊະນິດ ນີ້ງ່າຍກວ່າການປູກຫວາຍທູນທີ່ເປັນຫວາຍເສັ້ນໃຫຍ່ຄືກັນ ແຕ່ຫວາຍທູນເປັນຫວາຍທີ່ເກີດດ່ຽວແລະໃຫຍ່ຊ້າກວ່າ ຫວາຍຕະບອງຫວາຍຊະນິດນີ້ເກີດເປັນສຸມໃຫຍ່ ແລະ ຖ້າຈະປູກເອົາສັ້ນຕ້ອງມີຕົ້ນໄມ້ເພື່ອໃຫ້ຫວາຍປີນປ່າຍ. ຫວາຍຕະບອງຈະພົບເຫັນຢູ່ພາກກາງ.ແຕ່ຜ່ານການປູກ ເພື່ອລວມພັນຢູ່ທີ່ສູນຄົ້ນຄວ້າປ່າໄມ້ ໃນປີ 1997 ເຫັນ ວ່າມີການຈະເລີນເຕີບໂຕດ້ານຄວາມຍາວດີ ແລະ ຍັງບໍ່ ມີໃຜນຳເອົາຫວາຍຊະນິດນີ້ມາປູກໃນ ສປປ ລາວ.

## 1. ປັດໃຈທີ່ຄວນເລືອກ

- ເນື້ອທີ່ສວນປູກຈະຕ້ອງເປັນເນື້ອທີ່ປ່າເລົ່າແກ່ ຫຼື ປ່າ ປະສົມທີ່ມີແສງສະຫວ່າງຜ່ານລົງປະມານ 50 — 70 % ຈຶ່ງສາມາດຈະເລີນເຕີບໂຕໄດ້.
- ລັກສະນະຂອງດິນຊາຍແກມຕົມ
- ມີຕົ້ນໄມ້ສຳລັບປີນປ່າຍ.


ມີຕົ້ນໄມ້ໃຫ້ຫວາຍປີນປ່າຍ

## 2. ເຕັກນິກການປູກ

**ແນວພັນ ແລະ ລະດູການ:**

- ແນວພັນຕ້ອງມີອາຍຸ 9 — 12 ເດືອນ
- ລະດູການທີ່ເໝາະສົມຕໍ່ການເພາະປູກແມ່ນເດືອນ 5 (ພຶດສະພາ)

**ໄລຍະຫ່າງການປູກ:**

- ໄລຍະຫ່າງຂອງຖັນ ແລະ ແຖວ 2X3 ແມັດ

**ການຂຸດຂຸມ ແລະ ປູກ**

- ຂະໜາດຂອງຂຸມ 30X30X30 ຊັງຕີແມັດ.
- ຫົດນ້ຳຫຼັງຈາກປູກແລ້ວ 1 — 2 ຄັ້ງ ຕໍ່ອາທິດ (ຖ້າ ຝົນບໍ່ຕົກ)

**ການບົວລະບັດຮັກສາ:**

ພາຍຫຼັງປູກຫວາຍແລ້ວ 3 ເດືອນ ໃຫ້ເອົາຝຸ່ນຄອກໃສ່ ໃນອັດຕາສ່ວນ 1 ກກ / ຕົ້ນ ຫຼື ຝຸ່ນເຄມີໃສ່ອີກ 1 ຄັ້ງ ຫຼື 200 ກຼ / ຕົ້ນ (ສູດ15— 15— 15 ຫຼື 18— 64— 00) ພ້ອມທັງອະນາໄມບ່ອນທີ່ຢູ່ໃກ້ກັບຕົ້ນຫວາຍນັ້ນອອກ, ຫວາຍຕະບອງເມື່ອປູກໄດ້ 4 ປີ ກໍ່ສາມາດອອກດອກ ແລະ ໝາກ.

## 3. ການເກັບກູ້ເສັ້ນຫວາຍ

ເສັ້ນຂອງຫວາຍຕະບອງຈະແຂງແຮງ ແລະ ໝັ້ນໜຽວ ໃນເມື່ອອາຍຸໄດ້ 10 ປີຂຶ້ນໄປ ຕໍ່ການວັດແທກທົດລອງ ເຫັນວ່າມີຂະໜາດຄວາມຍາວ 9 ແມັດ ຫຼື ອາດຈະຍາວກວ່ານີ້ ຖ້າພື້ນທີ່ເໝາະສົມກວ່າ ແລະ ມີການດູແລຮັກສາດີ.

(ຄຳພອນ ແສງດາລາ ແລະ ສູນທອນ ເກດພັນ 2006)



ຕົ້ນຫວາຍຕະບອງ

ຖ້າເຮົາປູກ:

1 ເຮັກຕາ = 1,666 ສຸມ,

1 ສຸມສະເລ່ຍມີ 11 ລຳ ແລະ ລຳທີ່ຍາວກວ່າ 4 ແມັດ ມີຈຳນວນ 3 ລຳ


WWF

ໂທ: 021 216080

ຂໍ້ມູນເຕັກນິກຕິດຕໍ່

ທ່ານ ຄຳພອນ ແສງດາລາ

ໂທ: 020 6861101

LEAP

ໂທ: 021 740253

ຫຼື 021 740252

SUFORD

ໂທ: 021 740544

ຫຼື 021 740543



**ພາຍໃຕ້ການຮ່ວມມື :**

ສະຖາບັນຄົ້ນຄວ້າ ເຕັກນິກ—ວິທະຍາສາດ ກະສິກຳ ແລະ ປ່າໄມ້,

ກອງສົ່ງເສີມກະສິກຳ ແລະ ປ່າໄມ້

**ສະໜັບສະໜູນໂດຍ:**

ໂຄງການ ສົ່ງເສີມ ກະສິກຳ **(LEAP),**

ກອງທຶນອະນຸລັກທຳມະຊາດໂລກ **(WWF) & (SUFORD)**


ສູນຂໍ້ມູນຂ່າວສານການສົ່ງເສີມ

# ເຕັກນິກການປູກ

# ຫວາຍຕະບອງ

***Calamus rudentum Loureiro***

